ໂຄງການທະສິທຳ ເພື່ອໂພຊະນາການ
ຂັ້ນຕອນການລ້ຽງກົບໃນຄອກ
ຢູ່ພື້ນທີ່ປູກຜັກສວນຄົວ

17

1 ສະຖານທີ່ ແລະ ຄວາມສຳຄັນ ຂອງການລ້ຽງກົບ

- ພື້ນທີ່ ທີ່ມີຄວາມແຫ້ງແລ້ງ ຫຼື ທີ່ມີນ້ຳນ້ອຍ, ຜູ້ລ້ຽງກົບ ສາມາດນຳໃຊ້ ການລ້ຽງໃນຄອກໜອງຜ້າຢາງໄດ້ໂດຍນຳໃຊ້ນ້ຳຈາກນ້ຳສ້າງ ຫຼື ນ້ຳບາດານ ມາລ້ຽງ.
- ສາມາດລ້ຽງກົບໃນພື້ນທີ່ຈຳກັດໄດ້ ແລະ ມີຄວາມສະດວກໃນການບໍລະບັດຮັກສາ.
- ໃຊ້ເວລາການລ້ຽງພຽງແຕ່ 3-4 ເດືອນ ກໍ່ສາມາດເອົາມາບໍລິໂພກ ຫຼື ຈຳໜ່າຍສ້າງລາຍໄດ້ໃຫ້ແກ່ຄອບຄົວ.
- ຖ້າລ້ຽງກົບໃນພື້ນທີ່ການຜະລິດຍັງຊ່ວຍຂ້າສັດຕູພືດ ເປັນຕົ້ນແມ່ນແມງໄມ້ຊະນິດຕ່າງໆ.

2 ທະນຽມຄອກໜອງດິນ ຫຼື ອ່າງຊີມັງ

2.1 ທະນຽມຄອກໜອງດິນ

- ສະຖານທີ່ຈະລ້ຽງຕ້ອງພື້ນທີ່ພຽງ ແລ້ວສ້າງຄອກຕາບ່າງຂຽວຂະ ໜາດ 2x3 ແມັດ ຫຼື 3x4 ແມັດ, ສ້າງໜອງຜ້າຢາງຂະໜາດ (0.6x0.6 ແມັດ) ເລິກ 15 ຊັ່ງຕີແມັດ 2 ອ່າງ ແລະ ເຮັດບ່ອນໃຫ້ອາຫານ.
- ໜອງຜ້າຢາງຕ້ອງໃສ່ທໍ່ລະບາຍນ້ຳ ເພື່ອປ່ຽນຖ່າຍນ້ຳ ເວລານ້ຳເປ່ເສຍ ຫຼື ສາມາດຖ່າຍນ້ຳໄດ້ທຸກວັນແມ່ນດີທີ່ສຸດ.
- ຄອກລ້ຽງກົບຄວນມີຂະໜາດ 2x3, 3x4 ແມັດ, 4x6 ແລະ 6x8 ແມັດ, ຖ້າເປັນອ່າງຊີມັງຄວນມີຂະໜາດ 2x3 ແມັດ ແລະ 3x4 ແມັດ.

2.2 ທະນຽມອ່າງຊີມັງ

- ການລ້ຽງກົບໃນອ່າງຊີມັງ ສາມາດລ້ຽງໄດ້ໃນພື້ນທີ່ຈຳກັດ ຂອງສວນຄົວ.
- ສາມາດສ້າງຄອກກົບ ຮູບແບບອ່າງສີ່ຫຼ່ຽມ ຂະໜາດ 2x3 ແມັດ ຫຼື 3x4 ແມັດ ແລະ ມີຄວາມສູງ 60 ຫາ 70 ຊັ່ງຕີແມັດ, ນອກນັ້ນຍັງສາມາດນຳໃຊ້ອ່າງກົມແບບສຳເລັດຮູບມີຂະໜາດ 1 ແມັດ ຫຼື 1.2 ແມັດ ແລະ ມີຄວາມສູງ 50 ຊັ່ງຕີແມັດ.
- ລະບົບອ່າງລ້ຽງ ຕ້ອງມີທໍ່ລະບາຍນ້ຳໃນການປ່ຽນຖ່າຍນ້ຳໄດ້ຕະຫຼອດເວລາ ໃນໄລຍະການລ້ຽງ.

ຮູບການສ້າງອ່າງລ້ຽງກົບແບບອ່າງສີ່ຫຼ່ຽມ

ຮູບການສ້າງອ່າງລ້ຽງກົບແບບອ່າງກົມ

3 ການເລືອກແມ່ພັນກົບມາລ້ຽງ

- ລູກກົບທີ່ນຳມາລ້ຽງຕ້ອງມີຂະໜາດ 2 ຊັ່ງຕີແມັດຂຶ້ນໄປ ຫຼື ຂະໜາດເທົ່າຫົວໂປ້ມື.
- ລູກກົບຕ້ອງລັກສະນະສົມບູນ, ແຂງແຮງດີ ແລະ ມີຂະໜາດເທົ່າກັນ ເພື່ອບໍ່ໃຫ້ລູກກົບກິນກັນເອງ ໃນເວລາລ້ຽງ.
- ແຫຼ່ງແມ່ພັນ.

ອັດຕາການປ່ອຍແມ່ພັນກົບລ້ຽງ

ຮູບແບບການລ້ຽງ	ຂະໜາດ (ແມັດ)	ຈຳນວນການປ່ອຍ (ໂຕ)
ການລ້ຽງໃນຄອກໜອງດິນ ຫຼື ອ່າງຊີມັງ	2X3	500
	4X4	1,000
	6X8	2,500



4 ປະເພດອາຫານ ແລະ ວິທີການໃຫ້ອາຫານ

- ສຳລັບປະເພດອາຫານແມ່ນອາຫານສຳເລັດຮູບຂອງກົບ ຫຼື ຂອງປາດຸກ ແລະ ມີທາດໂປຼຕີນ 30-35%.
- ການໃຫ້ອາຫານກົບນ້ອຍແມ່ນໃຫ້ປະມານ 10% ແລະ ກົບໃຫຍ່ແມ່ນໃຫ້ 3% ຂອງນ້ຳໜັກກົບຕໍ່ວັນ ແລະ ໃຫ້ 2 ຄັ້ງ (ຕອນເຊົ້າ ແລະ ຕອນແລງ).
- ອາຫານຈາກທຳມະຊາດເປັນອາຫານເສີມເຊັ່ນ: ຂີ້ກະເດືອນ, ປວກ ແລະ ແມງໄມ້ຊະນິດຕ່າງໆ.
- ຖ້າລ້ຽງກົບໃນໜອງຜ້າຢາງ ຫຼື ອ່າງຊີມັງ ເຮົາສາມາດເປີດດອກໄຟໃສ່ໃນຕອນກາງຄືນ ເພື່ອໃຫ້ແມງໄມ້ມາເປັນອາຫານກົບ.

ອັດຕາການໃຫ້ອາຫານການລ້ຽງກົບ ໃນຄອກໜອງຜ້າຢາງຂະໜາດ 2x3 ແມັດ ແລະ ປ່ອຍກົບລ້ຽງຈຳນວນ 500 ໂຕ

ລ/ດ	ໄລຍະເວລາການລ້ຽງ (ອັນ)	ອັດຕາການໃຫ້ອາຫານກຼາມ/ອັນ
1	ໄລຍະເວລາ 50 ອັນ	200 ກຼາມ/ອັນ
2	ໄລຍະເວລາ 60 ອັນ	300 ກຼາມ/ອັນ
3	ໄລຍະເວລາ 90 ອັນ	700 ກຼາມ/ອັນ
4	ໄລຍະເວລາ 120 ອັນ	1,500 ກຼາມ/ອັນ
5	ໄລຍະເວລາ 150 ອັນ	2,000 ກຼາມ/ອັນ

ອາຫານສຳເລັດຮູບປາດຸກ

ອາຫານຈາກທຳມະຊາດ (ປວກ)

ອາຫານຈາກທຳມະຊາດ (ຫອຍ)

ອາຫານຈາກທຳມະຊາດ (ຂີ້ກະເດືອນ)

5 ການບໍລະບັດຮັກສາ ແລະ ການເກັບກູ້ຜົນຜະລິດ

- ບໍ່ຄວນລ້ຽງກົບໃນຍາມໜາວ ເພາະກົບບໍ່ກິນອາຫານ ແລະ ມີການຈະເລີນເຕີບໃຫຍ່ຊ້າ ຫຼື ກົບເກີດເປັນພະຍາດໄດ້ງ່າຍ.
- ຖ້າລ້ຽງໃນຄອກຄວນອາບະໄມອ່າງ ແລະ ປ່ຽນຖ່າຍນ້ຳເປັນປະຈຳ ເພື່ອເຮັດໃຫ້ກົບກິນອາຫານດີ ແລະ ໃຫຍ່ໄວ.
- ການລ້ຽງກົບຄວນສ້າງບ່ອນລີ້ຊ່ອນໃຫ້ກົບອາໃສຢູ່ ເຊັ່ນ: ຜັກຕົບ, ຜັກບົ້ງ ແລະ ໄມ້ໄຜ່.
- ການໃຫ້ອາຫານກົບ ຄວນໃຫ້ພໍເໝາະກັບຄວາມຕ້ອງການອາຫານຂອງກົບທີ່ເຮົາລ້ຽງ, ຖ້າໃຫ້ຫຼາຍເກີນໄປຈະເຮັດໃຫ້ນ້ຳເນົ່າ.
- ຖ້າລ້ຽງກົບໄດ້ຂະໜາດ ກັບຄວາມຕ້ອງການ ຂອງຕະຫຼາດໃຫ້ຈັບກົບຈຳໜ່າຍ ຫຼື ເອົາມາກິນ.
- ການຈັບກົບມາຈຳໜ່າຍ ຄວນຄັດຂະໜາດກົບໃຫຍ່ຂາຍອອກ ແລະ ກົບມີຂະໜາດນ້ອຍໄວ້ກ່ອນ.



ບ້ານໂພນໄຊ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ສ ປປ ລາວ.
Phonexay village, Saysettha district, Vientiane Capital, Lao PDR.
ໂທ: +856 20 416 556
Fax: +856 20 416 556
E-mail : ssfsn.project@gmail.com
ເວັບໄຊ້: www.afn.gov.la